**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----------------------

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການນຳເຂົ້າ ແລະ ສົ່ງອອກ                                        ເລກທີ          /ກຂອ.ຂດ

ນະຄອນຫລວງວຽງຈັນ, ວັນທີ

**ຮຽນ:** ທ່ານ ລັດຖະມົນຕີວ່າການ.

**ເລື່ອງ:** ການເຂົ້າຮ່ວມເຮັດວຽກນຳຄະນະຫ້ອງການລັດຖະບານທີ່ ກິ່ງແຂວງ ສິບສອງພັນນາ ແຕ່ວັນທີ 16 -18/09/2012.

- ອີງໃສ່ ແຈ້ງການຂອງຫ້ອງວ່າການລັດຖະບານ ສະບັບເລກທີ 1632/ຫລບ.ກສສ, ລົງວັນທີ 6/09/2012.
- ອີງໃສ່ ຂໍ້ຕົກລົງ ເລກທີ 1901/ອຄ.ຈພງ, ລົງວັນທີ 07/09/2012 ວ່າດ້ວຍການແຕ່ງຕັ້ງພະນັກງານເຂົ້າຮ່ວມໃນຄະນະເຮັດວຽກຂອງຫ້ອງການລັດຖະບານ.

ກົມການນຳເຂົ້າ ແລະ ສົ່ງອອກ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບວ່າເພື່ອສືບຕໍ່ຜັນຂະຫຍາຍເນື້ອໃນສັນຍາວ່າດ້ວຍການປູກເຂືອໝາກນ້ຳມັນ ແລະ ບັນຫາການຄ້າຊາຍແດນ ລາວ-ຈີນ ໃຫ້ເປັນຮູບປະທຳ ທ່ານ ສີສູນທອນ ສິດທິມໍລະດາ ຜູ້ຊ່ວຍຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານເສດຖະກິດໄດ້ນຳພາຄະນະຜູ້ແທນຝ່າຍລາວ ເຊິ່ງປະກອບດ້ວຍຜູ້ຕາງໜ້າຈາກກະຊວງ, ຂະແໜງການ, ທ້ອງຖິ່ນກ່ຽວຂ້ອງ ແລະ ນັກທຸລະກິດ ລວມທັງໝົດ 15 ທ່ານ (ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້, ກົມການນຳເຂົ້າ ແລະ ສົ່ງອອກ, ຄະນະກຳມາທິການຮ່ວມມື ລາວ-ຈີນ, ຂະແໜງການກ່ຽວຂ້ອງ ແຂວງຫລວງນ້ຳທາ ແລະ ທຸລະກິດປູກເຂືອໝາກນ້ຳມັນ) ເດີນທາງໄປເຮັດວຽກຢູ່ ກິ່ງແຂວງ ສິບສອງພັນນາ ແຕ່ວັນທີ 16-18/09/2012. ຄະນະຝ່າຍຈີນນຳໂດຍທ່ານ ເສີນ ສີຈິງ ຮອງເຈົ້າກິ່ງແຂວງສິບສອງພັນນາ ພ້ອມດ້ວຍຄະນະ 13 ທ່ານໄດ້ຮ່ວມເຮັດວຽກນຳຄະນະຜູ້ແທນຝ່າຍລາວ. ລາຍລະອຽດຂອງການພົບປະປຶກສາຫາລືມີດັ່ງລຸ່ມນີ້:

I. <u>ຈຸດປະສົງ</u>:

1. ເພື່ອປຶກສາຫາລືກ່ຽວກັບໂຄງການປູກພືດເພື່ອທົດແທນຝິ່ນ ໂດຍສະເພາະແມ່ນລະບຽບການຂອງ ສປ ຈີນ ໃນການພິຈາລະນາເອົາໂຄງການປູກເຂືອໝາກນ້ຳມັນ ເຂົ້າໃນໂຄງການປູກພືດທົດແທນການປູກຝິ່ນ.

2. ປຶກສາຫາລືກ່ຽວກັບບັນຫາສຸຂາອານາໄມພືດ (SPS), ຂັ້ນຕອນການປູກ, ການເກັບກູ້, ປົກປັກຮັກສາ, ມາດຕະຖານຕ່າງໆກ່ຽວກັບເຂືອໝາກນ້ຳມັນ ແລະ ບັນຫາອື່ນທີ່ກ່ຽວຂ້ອງກັບສິນຄ້າກະສິກຳຂອງລາວ.

3. ປຶກສາຫາລືກ່ຽວກັບບັນຫາການຄ້າຊາຍແດນ ລາວ-ຈີນ; ການສົ່ງອອກເຂືອໝາກນ້ຳມັນ; ໂກຕາ ແລະ ການປະກອບເອກະສານການນຳເຂົ້າ ສປ ຈີນ.

II. ການປຶກສາຫາລື:

1. ໂຄງການປູກພືດທົດແທນການປູກຝິ່ນ.

- ສອງຝ່າຍໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນເຊິ່ງກັນ ແລະ ກັນ ກ່ຽວກັບໂຄງການປູກພືດທົດແທນການປູກຝິ່ນ ໂດຍຝ່າຍລາວໄດ້ແຈ້ງໃຫ້ຝ່າຍຈີນຊາບວ່າ ລັດຖະບານລາວໄດ້ມອບໃຫ້ຄະນະກຳມະການແຫ່ງຊາດ ເພື່ອກວດກາ ແລະ ຄວບຄຸມຢາເສບຕິດແຫ່ງຊາດເປັນຜູ້ຄຸ້ມຄອງ ແລະ ຂຶ້ນທະບຽນການປູກພືດເພື່ອທົດແທນການປູກຝິ່ນ ແລະ ເປັນຜູ້ຮັບຜິດຊອບ ແລະ ແຈ້ງການຫາຝ່າຍຈີນ ເພື່ອສະເໜີໃຫ້ຝ່າຍຈີນສະໜອງບັນຊີລາຍຊື່ ບໍລິສັດຈີນທີ່ປະຕິບັດໂຄງການປູກພືດທົດແທນການປູກຝິ່ນ ຢູ່ແຕ່ລະແຂວງຂອງລາວ, ພ້ອມທັງສະເໜີໃຫ້ພາກສ່ວນກ່ຽວຂ້ອງ ແນະນຳໃຫ້ບັນດາບໍລິສັດເຫລົ່ານັ້ນ ໄປລົງທືນຢູ່ເຂດເດີມປູກຝິ່ນ ທີ່ຝ່າຍລາວຈະແຈ້ງໃຫ້ຝ່າຍຈີນຊາບຕາມພາຍຫລັງ.

- ຝ່າຍຈີນໄດ້ແນະນຳ, ອະທິບາຍນະໂຍບາຍ, ຂໍ້ກຳນົດ ແລະ ຂັ້ນຕອນສະເໜີຂອງໂຄງການປູກພືດທົດແທນການປູກຝິ່ນ ແລະ ແຈ້ງບາງບັນຫາຄົງຄ້າງໃຫ້ຝ່າຍລາວຮັບຊາບ. ພ້ອມດຽວກັນນັ້ນ ຝ່າຍຈີນໄດ້ແຈ້ງໃຫ້ຝ່າຍລາວຊາບວ່າ ໃນປະຈຸບັນນີ້ ຝ່າຍຈີນໄດ້ສະເໜີເອົາໂຄງການປູກເຄືອໝາກນ້ຳມັນ ເຂົ້າໃນໂຄງການປູກພືດເພື່ອທົດແທນການປູກຝິ່ນ ໂດຍນຳສະເໜີຫາພາກສ່ວນກ່ຽວຂ້ອງຂອງຝ່າຍຈີນເພື່ອອະນຸມັດ. ສອງຝ່າຍເຫັນດີເອົາໂຄງການປູກເຄືອໝາກນ້ຳມັນ ເຂົ້າໃນບັນຊີລາຍການໂຄງການປູກພືດທົດແທນຝິ່ນ ແລະ ຝ່າຍຈີນຕ້ອງການໃຫ້ຝ່າຍລາວສະໜອງເອກະສານເຊັ່ນ: ສັນຍາທີ່ເຊັນກັນລະຫວ່າງວິສາຫະກິດຈີນ ແລະ ຝ່າຍລາວ ແລະ ເອກະສານອະນຸຍາດຈາກອົງການກວດກາ ແລະ ຄຸ້ມຄອງຢາເສບຕິດຂັ້ນແຂວງ.

2. ກ່ຽວກັບຂະແໜງກະສິກຳ (ສຸຂານາໄມພືດ SPS).

- ລະບຽບການຜ່ານດ່ານກ່ຽວກັບການປູກເຄືອໝາກນ້ຳມັນ ຢູ່ ສປປ ລາວ ເຫັນວ່າປະຈຸບັນພື້ນທີ່ປູກຍັງມີຂະໜາດນ້ອຍ, ປະລິມານການສົ່ງອອກບໍ່ຫລາຍ ແລະ ການສົ່ງອອກຈະເປັນລັກສະນະຂອງໝາກນ້ຳມັນແຫ້ງ. ດັ່ງນັ້ນ, ຝ່າຍຈີນຈຶ່ງສະເໜີໃຫ້ນຳເຂົ້າດ້ວຍຮູບການການຄ້າຊາຍແດນກ່ອນ ໂດຍປະສານກັບ CIQ ຂອງເມືອງຫລ້າ, ກິ່ງແຂວງ ສິບສອງພັນນາເລີຍ. ເມື່ອໃດມີຜົນຜະລິດຫລາຍແລ້ວຈຶ່ງປະກອບເອກະສານຕາມລະບຽບການ. ເພື່ອເຮັດໃຫ້ການສົ່ງອອກຖືກຕ້ອງຕາມລະບຽບຫລັກການ ແລະ ປົກປ້ອງສິດຜົນປະໂຫຍດຂອງຊາວກະສິກອນ, ຈຶ່ງເຫັນວ່າມີຄວາມຈຳເປັນຕ້ອງໄດ້ມີການເຊັນ ຂໍ້ກຳນົດກ່ຽວກັບເງື່ອນໄຂສຸຂາອານາໄມພືດສະເພາະຂອງໝາກນ້ຳມັນເຊິ່ງແມ່ນ ກົມປູກຝັງ, ກະຊວງກະສິກຳ ແລະ ປ່າໄມ້ຕ້ອງສະເໜີແຜນດຳເນີນການໄປຍັງກົມກັກກັນພືດ, ອົງການບໍລິຫານການຄຸ້ມຄອງ, ຕິດຕາມການກວດກາຄຸນນະພາບ, ການກັກກັນພືດ ແລະ ສັດ (AQSIQ) ແຫ່ງ ສປ ຈີນ ໂດຍໄວ, ເພື່ອໃຫ້ຝ່າຍຈີນສາມາດນຳທີມງານວິຊາການເຂົ້າມາສຳຫລວດ ແລະ ສຶກສາຄວາມສ່ຽງຂອງພະຍາດ, ສັດຕູພືດໝາກນ້ຳມັນ (PRA) ຢູ່ ສປປ ລາວ.

- ຝ່າຍລາວສະເໜີໃຫ້ຝ່າຍຈີນຊາບວ່າ: ການປູກເຄືອໝາກນ້ຳມັນເປັນພືດຕ່າງຖິ່ນ. ສະນັ້ນ, ຈຶ່ງສະເໜີໃຫ້ຝ່າຍຈີນໄດ້ມາຂຶ້ນທະບຽນແນວພັນ ນຳກົມປູກຝັງ, ກະຊວງກະສິກຳຂອງລາວ. ໂດຍຝ່າຍຈີນຍິນດີຈະສະໜອງຂໍ້ມູນກ່ຽວກັບພະຍາດ, ແມງໄມ້, ເຕັກນິກ, ການບົວລະບັດຮັກສາ, ການເກັບກູ້, ການຮັກສາແກ່ນ ແລະ ບັນຫາອື່ນໆໃຫ້ກົມປູກຝັງ.

- ສອງຝ່າຍເຫັນດີວ່າເຄືອໝາກນ້ຳມັນແມ່ນພືດເປັນຢາ ຈຶ່ງຕ້ອງປູກແບບມີການຄຸ້ມຄອງການນຳໃຊ້ຝຸ່ນ ແລະ ຢາປາບສັດຕູພືດໃຫ້ຖືກຕ້ອງຕາມຂໍ້ຕົກລົງຂອງ ກະຊວງກະສິກຳ ແລະ ປ່າໄມ້ຢ່າງເຂັ້ມງວດ; ແລະ ຈະຖືເອົາເຄືອໝາກນ້ຳມັນເປັນພືດຕົວແບບ, ເປັນພືດເສດຖະກິດສ້າງລາຍໄດ້ໃຫ້ແກ່ປະຊາຊົນ ແລະ

ທັງເປັນການແລກປ່ຽນບົດຮຽນເຕັກນິກການປູກຝັງ ເພື່ອໃຫ້ກາຍເປັນຕົວແບບໃນການເພີ່ມທະວີການຮ່ວມມື ລະຫວ່າງຂະແໜງກະສິກຳສອງຝ່າຍໃຫ້ແໜ້ນແຟ້ນຍິ່ງຂຶ້ນ.

3. <u>ບັນຫາການຄ້າຊາຍແດນ</u>.

- ສອງຝ່າຍໄດ້ແລກປ່ຽນຄຳຄິດຄຳເຫັນ ກ່ຽວກັບຮູບແບບການສົ່ງອອກສິນຄ້າກະສິກຳຂອງ ລາວ ໄປ ສປ ຈີນ ໂດຍຝ່າຍຈີນໄດ້ແຈ້ງໃຫ້ຝ່າຍລາວຊາບວ່າ: ຖ້າເຮັດໃນຮູບແບບການຄ້າທົ່ວໄປ ແມ່ນຕ້ອງໄດ້ ປະກອບເອກະສານຄົບຖ້ວນ ອອກຈາກ ສປປ ລາວ ໂດຍມີໃບຢັ້ງຢືນແຫລ່ງກຳເນີດສິນຄ້າ, ອິນວອຍ, ແພກຄິງລິດ, ພີໂຕ ແລະ ອື່ນໆ...ເຂົ້າຈີນຕ້ອງມີໃບຢັ້ງຢືນຄຸນນະພາບສິນຄ້າ, ສຸຂາອານາໄມພືດ (SPS) ອອກໂດຍອີງການກ່ຽວຂ້ອງຂອງ ສປ ຈີນ. ສ່ວນສິນຄ້າກະສິກຳຈຳນວນໜ້ອຍ, ສິນຄ້າທີ່ນອນຢູ່ໃນ ໂຄງການປູກພືດທົດແທນຝິ່ນ ແມ່ນສາມາດສົ່ງອອກໄດ້ຢູ່ທີ່ດ່ານຊາຍແດນທ່ຽງຊາດເຊັ່ນ: ປາງໄຮ - ເມືອງນານ (ຫລວງນ້ຳທາ - ມົນທົນຢູນນານ); ລານຕຸ້ຍ - ເມືອງຄັດ (ຜົ້ງສາລີ - ມົນທົນຢູນນານ) ໃນຮູບແບບການ ຄ້າຊາຍແດນ .

- ສຳລັບການປູກເຄືອໝາກນ້ຳມັນຢູ່ພາກເໜືອຂອງລາວໃນຕໍ່ໜ້າ ອີງໃສ່ສັນຍາລະຫວ່າງສອງ ຝ່າຍ (ລາວ - ຈີນ) ຖ້າມີຜົນຜະລິດແລ້ວເວລາສົ່ງອອກແມ່ນ ຈະຕ້ອງຈັດຕັ້ງປະຕິບັດການສົ່ງອອກ ໃນຮູບ ການການຄ້າຊາຍແດນ (ສາຍເຫດຍ້ອນຜົນຜະລິດໜ້ອຍ ແລະ ເປັນໝາກແຫ້ງ), ແຕ່ຖ້າມີໃບຢັ້ງຢືນແຫລ່ງ ກຳເນີດສິນຄ້າຈາກລາວ (C/O, Form E) ແມ່ນຈະໄດ້ຮັບບູລິມະສິດຫລຸດຜ່ອນພາສີ 0% ແຕ່ຕ້ອງເສຍ ອາກອນມູນຄ່າເພີ່ມຂອງຈີນ 13%. ຖ້າຢາກຫລຸດອາກອນ 13% ຜະລິດຕະພັນດັ່ງກ່າວແມ່ນຕ້ອງນອນຢູ່ ໃນໂຄງການປູກພືດທົດແທນການປູກຝິ່ນ.

- ຝ່າຍຈີນໄດ້ສະເໜີວ່າສິນຄ້າກະສິກຳຂອງລາວແມ່ນ ມີຄວາມສ່ຽງສູງດ້ານການລະບາດພະຍາດ ແລະ ສັດຕູພືດ. ສະນັ້ນເຫັນວ່າສອງຝ່າຍຕ້ອງໄດ້ສຶກສາຄວາມສ່ຽງ (PRA) ຂອງພະຍາດ ແລະ ສັດຕູພືດ ໃນລາຍການສິນຄ້າ ໂຄງການປູກພືດທົດແທນການປູກຝິ່ນເຊັ່ນ: ໝາກກ້ວຍ, ມັນຕົ້ນ, ເຂົ້າ, ໝາກແຕງໂມ ແລະ ເຄືອໝາກນ້ຳມັນ ເພື່ອອຳນວຍຄວາມສະດວກໃຫ້ແກ່ພືດດັ່ງກ່າວເຂົ້າໄປຕະຫລາດ ສປ ຈີນ ສະດວກ ດີຂຶ້ນ ໃນຕົ້ນປີ 2013.

- ສອງຝ່າຍໄດ້ປຶກສາຫາລື ແລະ ຕົກລົງເປັນເອກະພາບວ່າ ຈະມອບໝາຍໃຫ້ບໍລິສັດຂອງສອງ ຝ່າຍຮ່ວມມືກັນບົນພື້ນຖານສັນຍາລະຫວ່າງທຸລະກິດ ທີ່ກຳນົດລະອຽດເຖິງຈຸດມອບຮັບ, ລາຄາ, ມາດຕະ ຖານໝາກນ້ຳມັນ ແລະ ເອກະສານທີ່ຈຳເປັນໃນການສົ່ງອອກໝາກນ້ຳມັນໄປ ສປ ຈີນ.

- ໄລຍະການເດີນທາງໄປເຮັດວຽກຄັ້ງນີ້ ຄະນະຜູ້ແທນຝ່າຍລາວໄດ້ລົງເບິ່ງສະຖານທີ່ປູກເຄືອ ໝາກນ້ຳມັນ ແລະ ສະຖານທີ່ຈະສ້າງໂຮງງານຜະລິດໝາກນ້ຳມັນ.

III. <u>ສັງເກດຕີລາຄາ</u>.

ການເດີນທາງເຂົ້າຮ່ວມນຳຄະນະຫ້ອງການລັດຖະບານ ໄປເຮັດວຽກກັບອຳນາດການປົກຄອງ ກິ່ງ ແຂວງສິບສອງພັນນາໃນຄັ້ງນີ້ ຖືວ່າບັນລຸເປົ້າຫມາຍຈຸດປະສົງທີ່ຄະນະຝ່າຍລາວວາງອອກ ໄດ້ຮັບການ ຕ້ອນຮັບອັນອົບອຸ່ນຈາກເຈົ້າພາບ, ການພົບປະປຶກສາຫາລື ແມ່ນເຕັມໄປດ້ວຍບັນຍາກາດທີ່ສະໜິດສະໜົມ ແລະ ກົງໄປກົງມາ ບັນຫາສ່ວນໃຫຍ່ແມ່ນໄດ້ຕົກລົງເປັນເອກະພາບກັນລະອຽດ ລະບຸໃນບົດຊ່ວຍຈຳທີ່ເຊັນ ຮ່ວມກັນໂດຍ ທ່ານ ສີສູນທອນ ສິດທິມໍລະດາ ຜູ້ຊ່ວຍທ່ານຮອງນາຍົກລັດຖະມົນຕີ, ຜູ້ຊີ້ນຳວຽກງານ ເສດຖະກິດແຫ່ງ ສປປ ລາວ ແລະ ທ່ານ ເສີນສີຈົງ ຮອງເຈົ້າກິ່ງແຂວງ ສິບສອງພັນນາແຫ່ງ ສປ ຈີນ. ນອກຈາກນີ້ດ້ານການຄ້າສັງເກດເຫັນວ່າ:

- ການສົ່ງອອກສິນຄ້າກະສິກຳຂອງ ລາວ ໄປ ສປ ຈີນ ໃນປະຈຸບັນນີ້ ແມ່ນຈະເປັນການສົ່ງ ອອກສິນຄ້າແບບທົ່ວໄປບໍ່ແມ່ນຮູບແບບການຄ້າຊາຍແດນ ຍ້ອນສາຍເຫດທີ່ວ່າສິນຄ້າມີຈຳນວນ

ຫລາຍ ແລະ ສປ ຈີນ ໄດ້ໃຫ້ມາສົ່ງອອກຢູ່ດ່ານສາກົນ, ປະຕິບັດລະບົບແຈ້ງພາສີຂາເຂົ້າທົ່ວໄປ. ສະນັ້ນສິນຄ້າກະສິກຳຂາອອກຂອງ ລາວ ຕ້ອງໄດ້ປະຕິບັດຕາມລະບຽບການນຳເຂົ້າຂອງ ສປ ຈີນ ໂດຍຕ້ອງໄດ້ມີການສຶກສາຄວາມສ່ຽງກັບເຈົ້າໜ້າທີ່ກ່ຽວຂ້ອງຂອງ ຝ່າຍຈີນ.

- ຄະນະຝ່າຍລາວຍັງສາມາດຊອກຮູ້ໄດ້ລາຄາເກັບຊື້ຫມາກນ້ຳມັນລາຄາສົ່ງຮອດໂຮງງານຈະມີ 03 ປະເພດ ຄື: 30, 25 ແລະ 20 ຢວນ ຂຶ້ນກັບເກຣດຂອງຫມາກນ້ຳມັນແຫ້ງ.

- ສັງເກດເຫັນວ່າ: ຕະຫລາດຫມາກນ້ຳມັນຢູ່ ສປ ຈີນ (ກິ່ງແຂວງສິບສອງພັນນາແມ່ນມີແນວໂນ້ມທີ່ຈະຂະຫຍາຍໂຕດີ ໂດຍສະເພາະເມື່ອການກໍ່ສ້າງໂຮງງານສະກັດນ້ຳມັນເຄືອຫມາກນ້ຳມັນສຳເລັດຢ່າງໃດກໍ່ດີ ຊາວກະສິກອນລາວທີ່ປູກເຄືອຫມາກນ້ຳມັນກໍ່ຍັງມີຄວາມສ່ຽງຢູ່ ເພາະມີພຽງຈີນຕະຫລາດດຽວທີ່ເກັບຊື້. ສະນັ້ນ, ໃນຕໍ່ຫນ້າຄວນແນະນຳໃຫ້ນັກທຸລະກິດສົ່ງອອກຂອງລາວ ສຶກສາຊອກຫາຕະຫລາດສຳຮອງເພີ່ມ ໂດຍສະເພາະແລ້ວແມ່ນຕະຫລາດພາຍໃນປະເທດ ເພາະຫມາກນ້ຳມັນແມ່ນພືດເປັນຢາສາມາດບໍລິໂພກທັງ ໃບ ແລະ ຫມາກໄດ້.

IV. <u>ແຜນການໃນຕໍ່ໜ້າ</u>.

1. ສືບຕໍ່ຈັດຕັ້ງປະຕິບັດສັນຍາວ່າດ້ວຍການປູກເຄືອໝາກນ້ຳມັນສິບສອງພັນນາລະຫວ່າງ ກະຊວງກະສິກຳ ແລະ ປ່າໄມ້ແຫ່ງ ສປປ ລາວ ແລະ ກິ່ງແຂວງສິບສອງພັນນາແຫ່ງ ສປປ ຈີນ ໂດຍຊຸກຍູ້ໃຫ້ທຸລະກິດສອງປະເທດໄດ້ພົບປະກັນ ແລະ ເຊັນສັນຍາຊື້ຂາຍຮ່ວມກັນ.
2. ປະສານພາກສ່ວນກ່ຽວຂ້ອງຂອງ ລາວ-ຈີນ ເພື່ອຊຸກຍູ້ໃຫ້ໂຄງການປູກເຄືອໝາກນ້ຳມັນ ເຂົ້າໃນບັນຊີລາຍການສິນຄ້າ ໂຄງການປູກພືດເພື່ອທົດແທນການປູກຝິ່ນ; ເຜີຍແຜ່ອະທິບາຍໃຫ້ນັກທຸລະກິດຂອງລາວຊາບກ່ຽວກັບ ລະບຽບການທີ່ຕ້ອງປະຕິບັດ ເພື່ອໃຫ້ໄດ້ນະໂຍບາຍບູລິມາສິດພາຍໃຕ້ໂຄງການປູກພືດທົດແທນການປູກຝິ່ນ.
3. ເຜີຍແຜ່ເນື້ອໃນບົດບັນທຶກຊ່ວຍຈຳການປຶກສາຫາລື ລະຫວ່າງຄະນະຜູ້ແທນຂັ້ນສູງລັດຖະບານແຫ່ງ ສປປ ລາວ ແລະ ຄະນະຜູ້ແທນຂັ້ນສູງກິ່ງແຂວງ ສິບສອງພັນນາ ແຂວງຢູນນານ ແຫ່ງ ສປ ຈີນ ຄັ້ງວັນທີ 17/09/2012 ໃຫ້ອຳນາດການປົກຄອງແຂວງພາກເໜືອຂອງລາວ ໄດ້ຮັບຮູ້ ໂດຍສະເພາະເງື່ອນໄຂການປູກເຄືອໝາກນ້ຳມັນ, ລາຄາຄ້ຳປະກັນ ແລະ ລະບຽບການຊື້ຂາຍວິທີການສົ່ງອອກ.
4. ປະສານກັບພາກສ່ວນກ່ຽວຂ້ອງຂອງ ລາວ-ຈີນ ເພື່ອຊອກຮູ້ຂໍ້ມູນຂ່າວສານກ່ຽວກັບການອຳນວຍຄວາມສະດວກໃຫ້ແກ່ສິນຄ້າກະສິກຳຂອງ ລາວ ລວມທັງຜະລິດຕະພັນໃໝ່ເຄືອໝາກນ້ຳມັນ ໃຫ້ສົ່ງອອກໄປຈີນສະດວກດີ.

ດັ່ງນັ້ນ, ຈິ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ຂໍທິດຊີ້ນຳ.

**ຫົວໜ້າກົມການນຳເຂົ້າ ແລະ ສົ່ງອອກ,**

<u>ສຳເນົາສົ່ງ</u>:

- ທ່ານ ລັດຖະມົນຕີຊ່ວຍວ່າການ 02 ທ່ານ "ເພື່ອລາຍງານ".
- ກົມນະໂຍບາຍການຄ້າຕ່າງປະເທດ "ເພື່ອຊາບ".